ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ
ກົມລ້ຽງສັດ ແລະ ການປະມົງ

ເລກທີ 5644/ກລປ
ນະຄອນຫຼວງວຽງຈັນ, ວັນທີ....20 OCT 2026

ໜັງສືປະກາດ

ເລື່ອງ: ປະກາດຮັບສະໝັກ ບຸກຄະລາກອນ ຜູ້ຊ່ວຍຜູ້ຈັດການໂຄງການ ປະຈຳໂຄງການ

- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມລ້ຽງສັດ ແລະ ການປະມົງ ສະບັບເລກທີ 1246/ກສ, ລົງວັນທີ 12 ກັນຍາ 2025;
- ອີງຕາມ ສັນຍາກູ້ຢືມ ແລະ ຊ່ວຍເຫຼືອລ້າ ລະຫວ່າງ ລັດຖະບານແຫ່ງ ສປປ ລາວ ກັບ ທະນາຄານພັດທະນາອາຊີ (ADB) ສະບັບເລກທີ ADB Loan No. 4542-LAO (COL), Grant No. 0994-LAO (SF) and Grant No. 0995- LAO (CCF), ລົງວັນທີ 12 ທັນວາ 2024;

ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຂໍປະກາດຮັບສະໝັກບຸກຄະລາກອນ **ຜູ້ຊ່ວຍຜູ້ຈັດການໂຄງການ** ປະຈຳໂຄງການປັບປຸງການຄວບຄຸມພະຍາດສັດເປັນສິນຄ້າຕາມແລວຊາຍແດນ. ໂຄງການດັ່ງກ່າວ ໄດ້ຮັບທຶນກູ້ຢືມ ແລະ ທຶນຊ່ວຍເຫຼືອລ້າຈາກທະນາຄານພັດທະນາອາຊີ (ADB) ລວມມູນຄ່າ 42 ລ້ານໂດລາສະຫະລັດ, ໃນນີ້ປະກອບມີທຶນກູ້ຢືມ 30 ລ້ານໂດລາສະຫະລັດ, ທຶນຊ່ວຍເຫຼືອລ້າ 12 ລ້ານໂດລາສະຫະລັດ ແລະ ທຶນຊ່ວຍເຫຼືອລ້າ ຈາກກອງທຶນການປ່ຽນແປງດິນຟ້າອາກາດ ຈຳນວນ 0.9 ລ້ານໂດລາສະຫະລັດ, ໂດຍມີໄລຍະການຈັດຕັ້ງປະຕິບັດໂຄງການ 7 ປີ (2025–2032).

ດັ່ງນັ້ນ, ໂຄງການຈຶ່ງມີຄວາມຕ້ອງການຮັບສະໝັກບຸກຄະລາກອນ (ຄົນລາວ) ທີ່ມີຄຸນສົມບັດເໝາະສົມ ເຂົ້າຮ່ວມງານ ໃນ 01 ຕຳແໜ່ງ ຄື: **ຜູ້ຊ່ວຍຜູ້ຈັດການໂຄງການ (Project Manager Assistant)** ປະຈຳຢູ່ກົມລ້ຽງສັດ ແລະ ການປະມົງ, ໂດຍຜູ້ສະໝັກຕ້ອງມີຄຸນວຸດທິການສຶກສາ ແລະ ປະສົບການເຮັດວຽກລາຍລະອຽດດັ່ງນີ້:

- ລະດັບປະລິນຍາຕີ ສາຂາກະສິກຳ, ການລ້ຽງສັດ, ການພັດທະນາຊົນນະບົດ, ການບໍລິຫານໂຄງການ, ການບໍລິຫານທຸລະກິດ, ການບໍລິຫານລັດເສດຖະກິດ ຫຼື ສາຂາທີ່ກ່ຽວຂ້ອງ. ຖ້າມີລະດັບປະລິນຍາໂທ ຈະຖືເປັນຂໍ້ໄດ້ປຽບ;
- ມີປະສົບການວິຊາຊີບທີ່ກ່ຽວຂ້ອງ ຢ່າງໜ້ອຍ 5 ປີ ໃນດ້ານການບໍລິຫານໂຄງການ, ການປະສານງານ, ການຄຸ້ມຄອງໂຄງການ ຫຼື ໂຄງການພັດທະນາ;
- ມີປະສົບການເຮັດວຽກຮ່ວມກັບອົງການຈັດຕັ້ງຂອງລັດ, ຄຸ່ຮ່ວມພັດທະນາ, ທີມງານທີ່ປຶກສາ ຫຼື ໂຄງການທີ່ໄດ້ຮັບທຶນຊ່ວຍເຫຼືອຈາກຜູ້ໃຫ້ທຶນ;
- ມີປະສົບການໃນການປະສານງານຫຼາຍທີມງານ ຫຼື ຫຼາຍອົງປະກອບຂອງໂຄງການ ຈະເປັນການດີຍິ່ງ;
- ມີຄວາມເຂົ້າໃຈດີກ່ຽວກັບການວາງແຜນໂຄງການ, ການຕິດຕາມການຈັດຕັ້ງປະຕິບັດ, ການລາຍງານ ແລະ ການຈັດເກັບມ້ຽນເອກະສານ;
- ມີທັກສະດ້ານການສື່ສານ ແລະ ການພົວພັນກັບຜູ້ອື່ນທີ່ດີ;
- ມີທັກສະດ້ານການຈັດຕັ້ງ ແລະ ການຕິດຕາມວຽກງານທີ່ເຂັ້ມແຂງ;
- ມີທັກສະດ້ານຄອມພິວເຕີທີ່ດີ, ໂດຍສະເພາະ Microsoft Word, Excel, PowerPoint, ອີເມວ ແລະ ການຈັດການເອກະສານ;

- ສາມາດສື່ສານຢ່າງມີປະສິດທິພາບທັງພາສາລາວ ແລະ ພາສາອັງກິດ. ຖ້າຂຽນພາສາອັງກິດໄດ້ດີ ຈະເປັນຂໍ້ໄດ້ປຽບ.

. ຜູ້ສົນໃຈສະໝັກໃນຕຳແໜ່ງດັ່ງກ່າວ ຜູ້ສະໝັກທີ່ສົນໃຈສາມາດຂໍເອົາ ຂໍ້ກຳນົດຂອບເຂດວຽກ (TOR) ສະບັບເຕັມ ໄດ້ ແລະ ໃຫ້ສົ່ງໃບສະແດງຄວາມສົນໃຈ (EOI) ພ້ອມດ້ວຍຈົດໝາຍສະໝັກວຽກ ແລະ ຊີວະປະຫວັດຫຍໍ້ (CV) ເຖິງ ທ່ານ ທອງຄຸນ ຄ່ອງຫຼ້າລ່ຽນ, ຫົວໜ້າປະສານງານໂຄງການ ຄສຊ, ກົມລ້ຽງສັດ ແລະ ການປະມົງ, ອີເມວ: clhvcip.adb@gmail.com; thongkh.kl@gmail.com ເບີໂທລະສັບ: 856-20-22465634 ແລະ ນາງ ວັນນິດາ ທອງພັນມະຫາ, ຊ່ຽວຊານບັນຊີ-ການເງິນ, ອີເມວ: vannidathongphan@gmil.com. ກຳນົດຮັບໃບສະໝັກແຕ່ວັນທີເລີ່ມປະກາດຈົນເຖິງວັນທີ 01 ທັນວາ 2026 ເວລາ 16:00 ໂມງ.

ດັ່ງນັ້ນ, ຈຶ່ງປະກາດມາເພື່ອຊາບ ແລະ ແຈ້ງທ່ານທີ່ຕ້ອງການສະໝັກດ້ວຍ.

ລມ. ຫົວໜ້າກົມ

ສຸພາວັນ ແກ້ວວິໄລ